ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ເລກທີ 2767 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 07 JUL 2025

# ໜັງສືແຈ້ງການ

**ເຖິງ:** ບັນດາບໍລິສັດຂາອອກ-ຂາເຂົ້າດ້ານຢາ ແລະ ຜະລິດຕະພັນການແພດ ແລະ ຮ້ານຂາຍຍ່ອຍຢາ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການມີສ່ວນຮ່ວມໃນການຈໍລະຈອນຈໍາໜ່າຍຜະລິດຕະພັນຢາຂ້າໜອນນໍ້າ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງບໍລິສັດດໍາເນີນທຸລະກິດດ້ານຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 1820/ສທ, ລົງວັນທີ 25 ສິງຫາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21 ກັນຍາ 2016;
- ອີງຕາມ ກອງປະຊຸມປຶກສາຫາລືກ່ຽວກັບການການຈໍາໜ່າຍຢາຂ້າໜອນນໍ້າ ຄັ້ງວັນທີ 23 ພຶດສະພາ 2025;
- ອີງຕາມ ການຄົ້ນຄວ້າຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ ໃນປະຈຸບັນຢູ່ ສປປ ລາວ ເປັນລະດູຝົນ ທີ່ມີຄວາມສ່ຽງຕໍ່ການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ, ສະນັ້ນ ເຫັນວ່າບັນດາຜູ້ປະກອບການດ້ານຢາ ແລະ ຜະລິດຕະພັນການແພດ ມີຄວາມສໍາຄັນຕໍ່ການປະກອບສ່ວນ ໃນວຽກງານປ້ອງກັນ ການແຜ່ລະບາດຂອງເຊື້ອພະຍາດໄຂ້ຍຸງລາຍ ແລະ ການກໍາຈັດໜອນນໍ້າຍຸງລາຍ. ກົມອາຫານ ແລະ ຢາ ຈຶ່ງອະນຸຍາດໃຫ້ຜູ້ປະກອບການທຸລະກິດ ຂາອອກ - ຂາເຂົ້າ ດ້ານຢາ ແລະ ຜະລິດຕະພັນການແພດ ສາມາດນໍາເຂົ້າ ແລະ ຈໍາໜ່າຍ ຜະລິດຢາຂ້າໜອນນໍ້າ ແລະ ຢາພົ່ນຂ້າຍຸງລາຍຕົວແກ່ ທີ່ສູນໄຂ້ຍຸງ ແມ່ກາຝາກ ແລະ ແມງໄມ້ ແລະ ກົມຄວບຄຸມພະຍາດຕິດຕໍ່ ໄດ້ກໍານົດໃຫ້ນໍາໃຊ້, ເຊິ່ງປະກອບມີ ຢາຂ້າໜອນນໍ້າຊະນິດ Bacillus thuringiensis israelensis (Bti) strain AM 65-52, ຢາຂ້າໜອນນໍ້າຊະນິດ Abate (Temephos 1% ) ແລະ ຢາພົ່ນຂ້າຍຸງລາຍຕົວແກ່ Deltametherin 0.5% ໃນຮູບແບບຕ່າງໆ.

ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງການຊົມໃຊ້ຜະລິດຕະພັນຢາຂ້າໜອນນໍ້າ ແລະ ຢາພົ່ນຂ້າຍຸງລາຍຕົວແກ່ໄດ້ຢ່າງທົ່ວເຖິງ, ກົມອາຫານ ແລະ ຢາ ຈຶ່ງແຈ້ງໃຫ້ບັນດາຫົວໜ່ວຍຜູ້ປະກອບການດັ່ງກ່າວ ຈັດຕັ້ງປະຕິບັດດັ່ງນີ້:

1. **ສໍາລັບບໍລິສັດຂາອອກ-ຂາເຂົ້າ ດ້ານຢາ ແລະ ຜະລິດຕະພັນການແພດ:**

- ສາມາດນໍາເຂົ້າ ຜະລິດຕະພັນຢາຂ້າໜອນນໍ້າ ມາຈໍາໜ່າຍໃນ ສປປ ລາວ ຕາມປະເພດ ທີ່ໄດ້ກໍານົດຂ້າງເທິງ ແລະ ປະຕິບັດຕາມລະບຽບການດ້ານຢາ ແລະ ຜະລິດຕະພັນການແພດ;
- ຕ້ອງມີສາງເກັບຮັກສາສະເພາະ ຫຼື ຈັດສັນພື້ນທີ່ ບໍ່ໃຫ້ປົນກັບຢາ ແລະ ຜະລິດຕະພັນການແພດອື່ນໆ ເພື່ອຮັບປະກັນການເກັບຮັກສາທີ່ດີ;
- ຜະລິດຕະພັນທີ່ຈະນໍາເຂົ້າຕ້ອງມີອາຍຸການນໍາໃຊ້ຢ່າງໜ້ອຍ 75% - 80% ຂອງວັນໝົດອາຍຸທີ່ກໍານົດໃນແຕ່ລະຜະລິດຕະພັນ;
- ການຂໍອະນຸຍາດນໍາເຂົ້າແມ່ນປະຕິບັດຕາມຂໍ້ຮຽກຮ້ອງ ແລະ ລະບຽບການຂອງຂະແໜງການອື່ນທີ່ກ່ຽວຂ້ອງ.

2. **ສໍາລັບຮ້ານຂາຍຍ່ອຍຢາ:**

- ໃຫ້ຈັດຊື້ຜະລິດຕະພັນຢາຂ້າໜອນນໍ້າ ແລະ ຢາພົ່ນຂ້າຍຸງລາຍຕົວແກ່ ຈາກບໍລິສັດຂາອອກ-ຂາເຂົ້າດ້ານ ຢາ ແລະ ຜະລິດຕະພັນການແພດ ທີ່ນໍາເຂົ້າຢ່າງຖືກຕ້ອງ;
- ອະນຸຍາດໃຫ້ຈໍາໜ່າຍ ຜະລິດຕະພັນຢາຂ້າໜອນນໍ້າ ແລະ ຢາພົ່ນຂ້າຍຸງລາຍຕົວແກ່ ໃນຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3;
- ຕ້ອງຈັດສັນ ແລະ ແຍກສະເພາະຜະລິດຕະພັນຢາຂ້າໜອນນໍ້າ ແລະ ຢາພົ່ນຂ້າຍຸງລາຍຕົວແກ່ ບໍ່ໃຫ້ປົນກັບຢາ ແລະ ຜະລິດຕະພັນການແພດອື່ນ;
- ໃຫ້ຂໍ້ມູນຂ່າວສານ ແລະ ແນະນໍາຜູ້ຊົມໃຊ້ ໃຫ້ປະຕິບັດຕາມຄູ່ມືການນໍາໃຊ້ທີ່ລະບຸໃນສະຫຼາກຂອງຜະລິດຕະພັນຢ່າງເຄັ່ງຄັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການປະຕິບັດຕາມແຈ້ງການນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ ★ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ